

# ຟາມໝູຂຸມອິນຊີ

ຂ້າພະເຈົ້າຊື່ ນາງ ເຢີມົວ ຫວາກູ້, ອາຍຸ 25 ປີ, ຈົບຊັ້ນກາງ ສາຂາລ້ຽງສັດ, ຈາກໂຮງຮຽນເຕັກນິກວິຊາຊີບແບບປະສົມ ແຂວງ ຊຽງຂວາງ. ຂ້າພະເຈົ້າສະໝັກກິດຈະກຳສົ່ງເສີມໄວໜຸ່ມ ໃຫ້ເຂົ້າເຖິງວຽກເຮັດງານທຳ ແລະ ເປັນຜູ້ລິເລີ່ມທຸລະກິດ ດ້ານກະສິກຳ ເພາະຍັງບໍ່ມີອາຊີບທີ່ໝັ້ນຄົງ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ທັງໝົດແມ່ນ 8,662,000 ກີບ (ແປດລ້ານຫົກແສນຫົກສິບສອງພັນກີບ).

**ປະເພດທຸລະກິດ:**
ທຸລະກິດທີ່ເຮັດແມ່ນລ້ຽງໝູຂຸມ ທີ່ເລືອກເຮັດທຸລະກິດນີ້ ເພາະວ່າຮຽນຈົບລ້ຽງສັດ ແລະ ແມ່ກໍ່ລ້ຽງໝູລາດມາກ່ອນ.

**ການນຳໃຊ້ທຶນ:**
ໃນປີ 2019 ໄດ້ນຳໃຊ້ທຶນ ນຳມາຊື້ອຸປະກອນສ້າງຄອກ ຂະໜາດ 3 x 3 ແມັດ ຈຳນວນ 4 ຄອກ, ຊື້ໝູແມ່ພັນ 2 ແມ່, ຊື້ຕາໜ່າງເຫຼັກລ້ອມບໍລິເວນຄອກໝູ, ຊື້ແກບ ແລະ ອາຫານໝູ (ຣຳ, ສາລີ).

**ເປົ້າໝາຍ:**
ເປົ້າໝາຍຂອງຂ້າພະເຈົ້າໃນປີ 2020 ແມ່ນ ຂາຍໝູນ້ອຍໃຫ້ໄດ້ 30 ໂຕ ແລະ ຂາຍຝຸ່ນໃຫ້ໄດ້ 1,400 ກິໂລ.

**ບັນຫາທີ່ພົບພໍ້:**
ບບັນຫາໝູນ້ອຍຕາຍຈາກພະຍາດຖອກທ້ອງ 3 ໂຕ (ເພາະຍາດກິນອາຫານນຳແມ່) ແລະ ໝູນ້ອຍຕາຍຍ້ອນແມ່ໝູທັບ 2 ໂຕ, ຂ້າກິນ 1 ໂຕ. ວິທີແກ້ໄຂແມ່ນ ເວລາເກືອອາຫານໝູແມ່ລູກອ່ອນ ໄດ້ແຍກລູກໝູອອກ ແລະ ໄດ້ຕິດຕາມໃກ້ຊິດໃນຊ່ວງທີ່ໝູຍັງນ້ອຍ ເພື່ອປ້ອງກັນບໍ່ໃຫ້ແມ່ໝູນອນທັບໝູນ້ອຍ. ການຖອກທ້ອງຂອງໝູນ້ອຍແມ່ນເກີດຈາກການເລຍອາຫານຂອງແມ່. ສະນັ້ນ, ເພື່ອປ້ອງກັນແມ່ນແຍກບໍ່ໃຫ້ໝູນ້ອຍເລຍອາຫານຂອງແມ່.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**

- ໃນປີ 2020 ຂາຍໝູນ້ອຍທັງໝົດ 20 ໂຕ ແລະ ຂາຍຝຸ່ນ (ຂີ້ໝູ) ໄດ້ 98 ເປົາ ລວມເປັນເງິນ 17,280,000 ກີບ ເງິນທີ່ໄດ້ມາແມ່ນ ນຳມາໃຊ້ໃນການລ້ຽງໝູ.
- ໃນປີ 2021 ຂາຍໝູນ້ອຍໄດ້ 27 ໂຕ ເປັນເງິນມູນຄ່າ 26,960,000 ກີບ.





